# ສັນຍາກິສັນຍາ

ສັນຍາ ອາດເປັນພຽງຄຳເວົ້າ ເຮົາແລກປ່ຽນກັນສອງຄົນ
ສັນຍາ ອາດເຈືອປົນດ້ວຍລາຍເຊັນ ຂີດຂຽນລົງເຫັນຮູ້
ສັນຍາ ອາດພຽງ ບຸສົບບຸ້ຍ ຍໍມືຂວາຂຶ້ນພຽງໄຫຼ່
ສັນຍາ ເປັນຂໍ້ມູນຜູກມັດໄວ້ ເປັນທາງໃຫ້ໄດ້ເຮັດຕາມ ຈິງແລ້ວ

ສັນຍາ ບໍ່ໄດ້ເປັນຂໍ້ຫ້າມ ເມື່ອໃຈຮໍ່າຢາກທຳຜິດ
ສັນຍາ ເພື່ອຄຳນວນຄວນຄິດ ໃຫ້ໄຕ່ຕອງທັງສອງດ້ານ
ສັນຍາ ອາດເປັນພຽງຄຳຕ້ານ ຂານອອກມາເພື່ອແລກປ່ຽນ
ສັນຍາ ຫາກຕ່າງພຽນຍຶດໝັ້ນ ສັນຍານັ້ນ...ຄ່າສູງ ແທ້ໃດ

ສັນຍາ ຄວນທີ່ຕັ້ງໜ້າມຸ້ງ ຄນຶງໃສ່ຄວາມປະພຶດ
ສັນຍາ ຕ້ອງຍຶດຖືເປັນສັຈຈະ ໃຫ້ທ່ຽງຕົງຄົງໄວ້
ສັນຍາ ຕ້ອງແມ່ນເຕັມໃຈໃຫ້ ຈຶ່ງຈາໄຂອ້າງເອີ່ຍ
ສັນຍາ ຖ້າປ່ອຍປະລະເລີຍ ບໍ່ຕຶກຕອງຮອບດ້ານ ສັນຍານັ້ນກໍເປົ່າດາຍ

ສັນຍາ ຖ້າບໍ່ຈິງໃຈໃຫ້ ຢ່າໄດ້ເອີ່ຍໄຂຂານ
ສັນຍາ ຕ່າງກັບຄຳສາບານ ແຕ່ຄ້າຍຄຽງພຽງດ້ານ
ສັນຍາ ຕ້ອງຮໍ່າພຽນໃຈຫ້າມ ຢ່າທຳລາຍໃຫ້ມ້າງມຸ່ນ
ສັນຍາ ໃຫ້ຖືວ່າເປັນຫີນ ເປັນປະຕູຮົ້ວກັ້ນ ເປັນຄຳໝັ້ນຢ່າປ່ຽນແປງ

ສັນຍາ ບໍ່ແມ່ນແນວເວົ້າແກ້ງ ຖແລງວາດແປງຊີງ
ສັນຍາ ເຮັດໃຫ້ວາງໃຈປົງ ອີກຝ່າຍຄົງທຳໄດ້
ສັນຍາ ແມ່ນຈັກດີຫຼືຮ້າຍ ຕ້ອງມີໃຈຕັ້ງຕໍ່
ສັນຍາ ທຸກເວລາໃຫ້ຄຶດພໍ້ ຮັກສາໄວ້ໃຫ້ຢັ້ງຍືນ....